| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດຊອກຄົ້ນແຮ່ທາດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-GMD-13 | 21.09.2017 | ກົມທໍລະນີສາດ ແລະ ແຮ່ທາດ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ແຮ່ທາດແມ່ນໜຶ່ງໃນຊັບພະຍາກອນທີ່ສໍາຄັນຂອງ ສປປ ລາວ ຈຶ່ງມີຄວາມຈໍາເປັນຢ່າງຍິ່ງທີ່ຈະຕ້ອງຄວບຄຸມການດໍາເນີນກິດຈະການທັງໝົດທີ່ຕິດພັນກັບ ທຸລະກິດແຮ່ທາດດັ່ງກ່າວ ດ້ວຍການກໍານົດໃຫ້ຕ້ອງມີການຂໍໃບອະນຸຍາດກ່ອນເລີ່ມຕົ້ນດໍາເນີນການ ເພື່ອຫລີກລ່ຽງການດໍາເນີນກິດຈະການແຮ່ທາດໂດຍບໍ່ຖືກຕ້ອງຕາມກົດໝາຍ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ນິຕິບຸກຄົນ ທີ່ມີຈຸດປະສົງ ຊອກຄົ້ນແຮ່ທາດ ຊຶ່ງໝາຍເຖິງ ການສຶກສາເອກະສານຂໍ້ມູນ ແລະ ການດໍາເນີນວຽກງານຢູ່ສະໜາມ ກ່ຽວກັບ ສະພາບທໍລະນີສາດ ແລະ ປາກົດການທີ່ມີແຮ່ທາດ ລວມທັງ ການຕີລາຄາຄຸນລັກສະນະຂອງແຮ່ທາດ ແນໃສ່ການກໍານົດເຂດທີ່ມີຄວາມເປັນໄປໄດ້ ເພື່ອກ້າວສູ່ການສໍາຫລວດ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | ໃນໄລຍະເວລາການຊອກຄົ້ນ, ບໍ່ອະນຸຍາດໃຫ້ມີການຮ່ວມທຶນ, ໂອນ, ຊື້-ຂາຍສິດສໍາປະທານຊອກຄົ້ນ. |

| ຄຸນະສົມບັດ ແລະ ເອກະສານປະກອບ |
|---|

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 90 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຕ້ອງເປັນວິສາຫະກິດ ຫລື ບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ຈົດທະບຽນດໍາເນີນທຸລກິດກ່ຽວກັບແຮ່ທາດ ຢ່າງຖືກຕ້ອງ 2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ, ສາມາດມີແຫລ່ງທຶນພຽງພໍ ແລະ ມີຫລັກຊັບຄໍ້າປະກັນ ຕາມລະບຽບການ 3. ມີປະຫວັດຄວາມເປັນມາ ກ່ຽວກັບ ການດໍາເນີນທຸລະກິດທີ່ດີ ແລະ ໜ້າເຊື່ອຖື 4. ມີວິຊາການທາງດ້ານເຕັກນິກ ແລະ ປະສົບການ ກ່ຽວກັບ ການຊອກຄົ້ນແຮ່ທາດ 5. ວິສາຫະກິດໜຶ່ງສາມາດດໍາເນີນການຊອກຄົ້ນແຮ່ທາດໄດ້ 1 ຕອນ ຊຶ່ງເນື້ອທີ່ບໍ່ໃຫ້ເກີນ 300 ກິໂລຕາແມັດ ແລະ ບໍ່ອະນຸຍາດໃຫ້ຂະຫຍາຍເນື້ອທີ່ຕື່ມ. | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີຜູ້ລົງທຶນ ມີຄຸນະສົມບັດບໍ່ຄົບຖ້ວນ ຫລື ພື້ນທີ່ຊອກຄົ້ນແມ່ນຢູ່ໃນພື້ນທີ່ທີ່ລັດຖະບານສະຫງວນ ຫລື ມອບສໍາປະທານໃຫ້ຜູ້ອື່ນແລ້ວ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 24 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ຕໍ່ອາຍຸໄດ້ອີກ 1 ປີ ພາຍໃຕ້ເງື່ອນໄຂ ດັ່ງນີ້: 1. ສັນຍາ ແລະ ໃບອະນຸຍາດຕ່າງໆ ທີ່ກ່ຽວຂ້ອງຍັງມີຜົນສັກສິດ 2. ການຕໍ່ອາຍຸຕ້ອງສະເໜີລ່ວງໜ້າ 3 ເດືອນກ່ອນວັນໝົດອາຍຸ 3. ບໍລິສັດໄດ້ປະຕິບັດພັນທະທາງດ້ານການເງິນ, ພັນທະຕໍ່ທ້ອງຖິ່ນ ແລະ ພັນທະອື່ນໆ ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ແລະ ສັນຍາທີ່ໄດ້ເຊັນກັບລັດຖະບານ 4. ບົດລາຍງານຜົນການຊອກົ້ນທົ່ວເຂດສໍາປະທານ ຕ້ອງສໍາເລັດຢ່າງໜ້ອຍ 60% ຂອງແຜນການທີ່ຮັບຮອງ 5. ແຜນການສືບຕໍ່ການຊອກຄົ້ນ ຕ້ອງໄດ້ຖືກຮັບຮອງຈາກ ກະຊວງກ່ຽວຂ້ອງ  ຖ້າບໍ່ມີການສະເໜີຕໍ່ຖືວ່າ ໃບອະນຸຍາດໝົດຄວາມສັກສິດ ໂດຍອັດຕະໂນມັດ. |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທຳນຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 300000.00 | 0.00 | 0.00 | 300000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ ເລກທີ 03/ປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 300000.00 | 0.00 | 0.00 | 300000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ ເລກທີ 03/ປທ | | | |

| ນິຕິກຳທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ນິຕິກຳ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ພາກທີ III ກິດຈະການກ່ຽວກັບ ແຮ່ທາດ (ມາດຕາ 20) ພາກທີ IV ທຸລະກິດກ່ຽວກັບແຮ່ທາດ (ມາດຕາ 34 ຫາ ມາດຕາ 37) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ແຜນດຳເນີນການກິດຈະກຳແຮ່ທາດ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສັຍອາກອນ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| 2016 | 7 | 0 |